# ສະຫະພັນບານເຕະ ແຫ່ງຊາດລາວ

## ລະບຽບວ່າດ້ວຍຈັນຍາບັນ

ປີ 2023

# ຄຳນຳ

ອີງຕາມ ກົດລະບຽບ ພາຍໃນ ຂອງ ສະຫະພັນ ບານເຕະ ແຫ່ງຊາດ ລາວ (ສຕລ), ກົດລະບຽບ ການແຂ່ງຂັນ ທຸກໆລາຍການ ແຂ່ງຂັນ ຂອງ ສຕລ ແລະ ລະບຽບການ ອື່ນໆ ທີ່ກ່ຽວຂ້ອງ, ເພື່ອ ເຮັດໃຫ້ ການຈັດຕັ້ງ ປະຕິບັດ ການ ຈັດການແຂ່ງຂັນ ລາຍການ ຕ່າງໆ ຂອງ ສຕລ ເປັນໄປ ດ້ວຍ ຄວາມຮຽບຮ້ອຍ ແລະ ຖືກຕ້ອງ ຕາມ ຫຼັກການ ຂອງ ການແຂ່ງຂັນ ບານເຕະ.

ລະບຽບ ວ່າດ້ວຍ ຈັນຍາບັນ ຂອງ ສຕລ ສະບັບນີ້ ແມ່ນ ນິຕິກຳ ທີ່ສຳຄັນ ທີ່ທຸກໆພາກສ່ວນ ທີ່ ເຂົ້າຮ່ວມ ການ ແຂ່ງຂັນ ຂອງ ສຕລ ຕ້ອງໄດ້ ປະຕິບັດຕາມ ຢ່າງເຂັ້ມງວດ, ບຸກຄົນໃດ ທີ່ໄດ້ລະເມີດ ລະບຽບການ ທີ່ກຳນົດໄວ້ ໃນ ລະບຽບ ສະບັບນີ້ ຈະຖືກ ປະຕິບັດ ວິໄນ ຕາມ ລະບຽບ ວ່າດ້ວຍ ການລົງວິໄນ ຫຼື ອາດຖືກ ດຳເນີນ ຄະດີ ຕາມ ກົດ ໝາຍ ວ່າດ້ວຍ ກິລາ-ກາຍຍະກຳ ລວມເຖິງ ຄະດີ ອາຍາ ຂຶ້ນກັບ ສະຖານ ການກະທຳຜິດ ຢ່າງເຄັ່ງຄັດ.

# ສາລະບານ

ໜ້າ

ຄຳນຳ....1
ສາລະບານ....2
ໝວດທີ 1....3
ຈັນຍາບັນ ຂອງ ບັນດາ ນັກກິລາ ແລະ ບຸກຄົນ ທີ່ກ່ຽວຂ້ອງ ກັບ ກິລາ ບານເຕະ....3
ມາດຕາ 1: ຂໍ້ບັງຄັບ....3
ໝວດທີ 2....5
ຂັ້ນຕອນ ແລະ ລະບຽບ ການບັງຄັບໃຊ້ ລະບຽບ ວ່າດ້ວຍ ຈັນຍາບັນ....5
ມາດຕາ 2: ຂອບເຂດ ຂອງ ການບັງຄັບ....5
ມາດຕາ 3: ການຝ່າຝືນ ຫຼື ລະເມີດ....5
ມາດຕາ 4: ຄະນະ ກຳມະການ ການສອບສວນ....5
ມາດຕາ 5: ຜົນ ຂອງ ການສອບສວນ....5
ມາດຕາ 6: ຜົນສັກສິດ ຂອງ ຄຳສັ່ງ....5
ມາດຕາ 7: ການຈັດຕັ້ງ ປະຕິບັດ ຄຳສັ່ງ....5
ໝວດທີ 3....6
ໂທດ ແລະ ມາດຕະການ ການລົງໂທດ....6
ມາດຕາ 8: ໂທດ....6
ມາດຕາ 9: ມາດຕະການ ການລົງໂທດ....6
ມາດຕາ 10: ມາດຕະການ ການລົງໂທດ ຕໍ່ ນັກກິລາ....6
ມາດຕາ 11: ມາດຕະການ ການລົງໂທດ ຕໍ່ ເຈົ້າໜ້າທີ່ ສະໂມສອນ....6
ມາດຕາ 12: ມາດຕະການ ການລົງໂທດ ຕໍ່ ສະໂມສອນ....6
ມາດຕາ 13: ມາດຕະການ ການລົງໂທດ ຕໍ່ ກອງເຊຍ....6
ມາດຕາ 14: ມາດຕະການ ການລົງໂທດ ຕໍ່ ເຈົ້າໜ້າ ການແຂ່ງຂັນ....7
ໝວດທີ 4....8
ບົດບັນຍັດ ສຸດທ້າຍ....8
ມາດຕາ 15: ການຈັດຕັ້ງປະຕິບັດ....8
ມາດຕາ 16: ການຈັດຕັ້ງ ປະຕິບັດ ນິຕິກຳ ສະບັບອື່ນ....8
ມາດຕາ 17: ຜົນສັກສິດ....8

# ໝວດທີ 1

# ຈັນຍາບັນ ຂອງ ບັນດາ ນັກກິລາ ແລະ ບຸກຄົນ ທີ່ກ່ຽວຂ້ອງ ກັບ ກິລາ ບານເຕະ

ມາດຕາ 1: ຂໍ້ບັງຄັບ.

ນັກກິລາ ແລະ ບຸກຄົນ ທີ່ກ່ຽວຂ້ອງ ກັບ ກິລາ ບານເຕະ ທຸກຄົນ ຕ້ອງປະຕິບັດ ຕາມ ລະບຽບ ວ່າດ້ວຍ ຈັນຍາບັນ ດັ່ງລຸ່ມນີ້:

1. ຕ້ອງປະຕິບັດ ໜ້າທີ່ ຂອງຕົນ ເຕັມຄວາມສາມາດ ດ້ວຍ ຄວາມຊື່ສັດ ສຸຈະລິດ ແລະ ຕ້ອງປະຕິບັດ ຕາມ ກົດລະບຽບ ແລະ ກະຕິກາ ການແຂ່ງຂັນ ທີ່ ສຕລ ວາງອອກ ຢ່າງເຂັ້ມງວດ.
2. ຕ້ອງເຄົາລົບ ການຕັດສິນ ຂອງ ກຳມະການ ແລະ ຜົນ ຂອງ ການແຂ່ງຂັນ.
3. ໃຊ້ ວາຈາ ສຸພາບ ແລະ ໃຫ້ກຽດ ຄົນອື່ນ ຫຼີກລ່ຽງ ການໃຫ້ສຳພາດ ແລະ ວິພາກ ວິຈານ ຄົນອື່ນ ທີ່ກ່ຽວຂ້ອງກັບ ພູມລຳເນົາ, ເຊື້ອຊາດ, ສາດສະໜາ, ພາສາ, ເພດ, ອາຍຸ, ການສຶກສາ ຊຶ່ງ ອາດຈະ ສົ່ງຜົນເສຍຫາຍ ແກ່ ບຸກຄົນອື່ນ ລວມເຖິງ ການໝິ່ນປະໝາດ.
4. ຕ້ອງບໍ່ ລະເມີດ ລະບຽບ ກົດໝາຍ, ສິນທຳ ແລະ ຮີດຄອງ ປະເພນີ ອັນດີງາມ ຂອງ ສປປ ລາວ ແລະ ບັນດາ ປະເທດ ທີ່ຕົນ ເຂົ້າຮ່ວມ ການແຂ່ງຂັນ.
5. ຕ້ອງບໍ່ຫຼິ້ນ ຫຼື ມີສ່ວນຮ່ວມ ກັບ ການພະນັນ, ບໍ່ ສູບ ແລະ ເສບ ສິ່ງເສບຕິດ ຫຼື ດື່ມສຸລາ ເປັນອາຈິນ.
6. ຕ້ອງບໍ່ ລົ້ມ ຫຼື ກ່ຽວຂ້ອງ ແລະ ມີສ່ວນຮ່ວມ ກັບ ການລົ້ມ ກິລາ.
7. ຕ້ອງບໍ່ ໃຫ້ການຮ່ວມມື ກັບ ຜູ້ກະທຳຜິດ ແລະ ມີ ລັກສະນະ ຂອງ ການກະທຳ ທີ່ລະເມີດ ກົດລະບຽບ ຕ່າງໆ ຂອງ ສຕລ ເຊັ່ນ: ກົດລະບຽບ ຫຼັກຂອງ ສຕລ (LFF Statute), ລະບຽບ ວ່າດ້ວຍ ຈັນຍາບັນ (Code of Ethics), ລະບຽບ ວ່າດ້ວຍ ການລົງວິໄນ (Disciplinary Codes), ກົດລະບຽບຕ່າງໆ ທີ່ ສຕລ ວາງອອກ ໃນແຕ່ລະ ໄລຍະ ແລະ ລະບຽບ ກົດໝາຍອື່ນ ທີ່ກ່ຽວຂ້ອງ.
8. ເມື່ອມີ ຂໍ້ຂັດແຍ່ງ ຫຼື ເຫັນວ່າ ຕົນເອງ ບໍ່ໄດ້ຮັບຄວາມເປັນທຳ ຈາກ ການແຂ່ງຂັນ ຢູ່ພາຍໃນປະເທດ ຕ້ອງ ສະເໜີ ຕາມ ຂັ້ນຕອນ ທີ່ໄດ້ກຳນົດໄວ້ ຢູ່ໃນ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ.
9. ໃນກໍລະນີ ມີຂໍ້ຂັດແຍ່ງ ເກີດຂຶ້ນ ລະຫວ່າງ ການແຂ່ງຂັນ ຢູ່ຕ່າງປະເທດ ຕ້ອງປະຕິບັດ ຕາມ ກົດລະບຽບ ການແຂ່ງຂັນ ຂອງ ລາຍການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.
10. ບໍ່ໃຫ້ໃຊ້ ຊ່ອງວ່າງ ຂອງ ກົດໝາຍ ຫຼື ກົດລະບຽບ ຕ່າງໆ ເພື່ອສ້າງ ຫຼື ສະແຫວງຫາ ຜົນປະໂຫຍດ ຕ່າງໆ.
11. ຕ້ອງປະຕິບັດ ຕົນ ໃຫ້ເປັນມິດ ກັບ ທຸກຝ່າຍ ແລະ ຜູ້ຊົມ ທຸກຄົນ.
12. ຕ້ອງບໍ່ໃຊ້ ວາຈາ ທີ່ບໍ່ ສຸພາບ ເຊັ່ນ: ເຍາະເຍີ້ຍ, ປ້ອຍດ່າ, ສຽດສີ ແລະ ຂົ່ມຂູ່ ຝ່າຍກົງຂ້າມ ຫຼື ກະທຳການໃດ ເພື່ອໃຫ້ເກີດ ເຫດວຸ້ນວາຍ ຫຼື ຈະລາຈົນຂຶ້ນ ທັງພາຍໃນ ແລະ ນອກ ສະໜາມ ການແຂ່ງຂັນ.
13. ຕ້ອງຮັກສາກຽດ ແລະ ຊື່ສຽງ ຂອງ ທີມຕົນເອງ, ສຕລ ແລະ ວົງການ ບານເຕະ ລາວ.

14. ບໍ່ໃຫ້ມີ ການປະພຶດ, ການຈັດຕັ້ງ ເຄື່ອນໄຫວ, ເຂົ້າໄປ ກ້າວກ່າຍ ແຊກແຊງ ການປະຕິບັດ ໜ້າທີ່ ຂອງ ຜູ້ອື່ນ ໂດຍບໍ່ ຊອບທຳ, ຊຶ່ງ ກໍ່ໃຫ້ເກີດ ຄວາມເສຍຫາຍ ຕໍ່ ການແຂ່ງຂັນ ແລະ ວົງການ ກິລາ ບານເຕະ.

15. ຕ້ອງບໍ່ ປະພຶດ ຫຼື ຈັດຕັ້ງ ເຄື່ອນໄຫວ ແລະ ດຳເນີນການ ທີ່ຂັດ ກັບ ຜົນປະໂຫຍດ ສ່ວນລວມ.

16. ໃນກໍລະນີ ພົບເຫັນ ການກະທຳ ທີ່ເປັນ ການລະເມີດ ລະບຽບ ວ່າດ້ວຍ ຈັນຍາບັນ ແລະ ລະບຽບກົດໝາຍ ອື່ນ. ຕ້ອງແຈ້ງ ຂໍ້ມູນ ຫຼື ລາຍງານ ພ້ອມທັງ ສິ່ງຂໍ້ມູນ ຫຼັກຖານ (ຖ້າມີ) ໃຫ້ແກ່ ສຕລ ທັນທີ.

17. ຕ້ອງໃຫ້ ຄວາມຊ່ວຍເຫຼືອ ແລະ ຮ່ວມມື ກັບ ສຕລ, ສະຫະພັນ ບານເຕະ ອາຊີ ແລະ ສະຫະພັນ ບານເຕະ ນາໆຊາດ ລວມທັງ ຂະແໜງການ ຂອງ ພາກລັດ ດັ່ງນີ້:
    - ຕ້ອງສົ່ງ ນັກກິລາ ໃນ ສະໂມສອນ ຂອງຕົນ ເຂົ້າຮ່ວມ ການແຂ່ງຂັນ ໃນນາມ ທີມຊາດ ທຸກຄັ້ງ ທີ່ ສຕລ ຮຽກຮ້ອງ.
    - ໃນກໍລະນີ ທີ່ສົງໄສ ວ່າມີ ການກະທຳຜິດ ກົດລະບຽບ ຕ້ອງໃຫ້ ຄວາມຮ່ວມມື ກັບ ສຕລ, ສະຫະພັນ ບານເຕະ ອາຊີ ແລະ ສະຫະພັນ ບານເຕະ ນາໆຊາດ ຫຼື ອົງການ ສືບສວນ-ສອບສວນອື່ນໆ ທີ່ກ່ຽວຂ້ອງ ໃນການສຳພາດ ແລະ ສືບສວນ-ສອບສວນ.
    - ໃນກໍລະນີ ທີ່ສົງໄສ ວ່າມີ ການກະທຳຜິດ ກົດໝາຍ ຂອງ ສ ປປ ລາວ ຕ້ອງໃຫ້ ຄວາມຮ່ວມມື ກັບ ເຈົ້າໜ້າທີ່ ຕຳຫຼວດ ໃນການສືບສວນ-ສອບສວນ ແລະ ດຳເນີນ ຄະດີ.

18. ຫາກຕົນເອງ ໄດ້ເຂົ້າຮ່ວມ ກິດຈະກຳໃດໆ ກໍຕາມ ທີ່ມີ ການດຳເນີນການ ຊຶ່ງ ຝ່າຝືນ ກົດລະບຽບຕ່າງໆ ຂອງ ສຕລ ເຊັ່ນ: ກົດລະບຽບຫຼັກ ຂອງ ສຕລ (LFF Statute), ລະບຽບ ວ່າດ້ວຍ ຈັນຍາບັນ (Code of Ethics), ລະບຽບ ວ່າດ້ວຍ ການລົງວິໄນ (Disciplinary Codes), ກົດລະບຽບຕ່າງໆ ທີ່ ສຕລ ວາງອອກ ໃນແຕ່ລະ ໄລຍະ ລວມທັງ ແລະ ລະບຽບ ກົດໝາຍອື່ນໆ ຈະຕ້ອງຂັດຄ້ານ ແລະ ລາຍງານໃຫ້ ສຕລ ຮັບຊາບ ທັນທີ.

19. ໃນກໍລະນີ ທີ່ຕົນ ໄດ້ເຂົ້າຮ່ວມ ໃນການພິຈາລະນາ ຫຼື ດຳເນີນການ ໃດໜຶ່ງ ທີ່ສົ່ງຜົນກະທົບ ຕໍ່ ຜົນປະໂຫຍດ ຂອງຕົນ ທີ່ເອີ້ນວ່າ ມີສ່ວນໄດ້-ເສຍ ຫຼື ຜົນປະໂຫຍດ ທັບຊ້ອນ (Conflict of Interest) ຈະ ຕ້ອງລາຍງານ ເລື່ອງດັ່ງກ່າວນັ້ນ ໃຫ້ ສຕລ ຮັບຊາບ ດ້ວຍຄວາມບໍລິສຸດໃຈ.

# ໝວດທີ 2
# ຂັ້ນຕອນ ແລະ ລະບົບ ການບັງຄັບໃຊ້ ລະບຽບ ວ່າດ້ວຍຈັນຍາບັນ

**ມາດຕາ 2: ຂອບເຂດ ການບັງຄັບໃຊ້.**

ບັນດາ ສະໂມສອນ, ຄະນະ ບໍລິຫານງານ ສະໂມສອນ, ຄູຝຶກ, ກຳມະການ ຕັດສິນ, ນັກກິລາ ແລະ ບຸກຄົນ ທີ່ກ່ຽວຂ້ອງ ກັບ ກິລາ ບານເຕະ ທຸກຄົນ ຕ້ອງປະຕິບັດໂຕ ຢູ່ໃນ ຂອບເຂດ ຂອງ ລະບຽບ ວ່າດ້ວຍ ຈັນຍາບັນ ສະບັບນີ້ ຢ່າງເຄັ່ງຄັດ.

**ມາດຕາ 3: ການຝ່າຝືນ ຫຼື ລະເມີດ.**

ໃນກໍລະນີ ມີຄຳຮ້ອງ ຫຼື ລາຍງານ ວ່າມີ ນັກກິລາ ຫຼື ບຸກຄົນ ທີ່ກ່ຽວກັບ ກິລາ ບານເຕະ ຝ່າຝືນ ຫຼື ລະເມີດ ລະບຽບ ວ່າດ້ວຍ ຈັນຍາບັນ ສະບັບນີ້, ປະທານ ສຕລ ຕ້ອງແຕ່ງຕັ້ງ ຄະນະ ກຳມະການ ເພື່ອ ພິຈາລະນາ ໃນການສອບສວນ.

**ມາດຕາ 4: ຄະນະກຳມະການ ການສອບສວນ.**

ຄະນະ ກຳມະການ ພິຈາລະນາ ການສອບສວນ ຕ້ອງມີ ຢ່າງໜ້ອຍ ຈຳນວນ 3 ທ່ານ ແຕ່ ບໍ່ໃຫ້ເກີນ 5 ທ່ານ ໃນການດຳເນີນ ການສອບສວນ ຄຳຮ້ອງ ຫຼື ບົດລາຍງານ ທີ່ກ່ຽວຂ້ອງ. ຫຼັກການ ໃນ ການແຕ່ງຕັ້ງຄະນະ ກຳມະການ ສອບສວນ ໃຫ້ອີງຕາມ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

ຜົນ ຂອງ ການສອບສວນ ໃຫ້ຖືເອົາ ຄຳເຫັນ ສ່ວນຫຼາຍ ໃນກໍລະນີ ຄຳເຫັນ ບໍ່ເປັນເອກະສັນ ຖ້າຄະແນນສຽງ ສະເໝີກັນ ໃຫ້ທ່ານປະທານ ສຕລ ເປັນຜູ້ຕັດສິນ.

**ມາດຕາ 5: ຜົນ ຂອງ ການສອບສວນ.**

ຫຼັງຈາກ ສອບສວນແລ້ວ ພົບວ່າ ບໍ່ມີ ການຝ່າຝືນ ຫຼື ລະເມີດ ລະບຽບ ວ່າດ້ວຍ ຈັນຍາບັນແລ້ວ, ປະທານ ສຕລ ຈະຕ້ອງອອກ ຄຳສັ່ງ ຍຸຕິ ການສອບສວນ ແລ້ວແຈ້ງຜົນ ໄປຫາ ຜູ້ຍື່ນ ຄຳຮ້ອງ ຫຼື ບົດລາຍງານ ແລະ ຜູ້ຖືກ ກ່າວຫາ.

ໃນກໍລະນີ, ພົບວ່າ ມີ ການຝ່າຝືນ ຫຼື ລະເມີດ ລະບຽບ ວ່າດ້ວຍ ຈັນຍາບັນແລ້ວ, ປະທານ ສຕລ ຕ້ອງອອກ ຄຳສັ່ງ ລົງວິໄນ ຕາມ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ແລະ ແຈ້ງຫາ ໜ່ວຍງານທີ່ກ່ຽວຂ້ອງ ໃນການດຳເນີນ ການລົງວິໄນ ຕາມ ສະຖານ ການກະທຳຜິດ ນັ້ນໆ ພາຍຫຼັງ ຄຳສັ່ງນັ້ນໃຊ້ໄດ້ ຢ່າງເດັດຂາດແລ້ວ.

**ມາດຕາ 6: ຜົນສັກສິດ ຂອງ ຄຳສັ່ງ.**

ຄຳສັ່ງ ຂອງ ທ່ານ ປະທານ ສຕລ ຖືເປັນ ທີ່ສິ້ນສຸດ ແລະ ຈັດຕັ້ງ ປະຕິບັດໄດ້, ຍົກເວັ້ນ ກໍລະນີ ທີ່ມີ ຂໍ້ມູນ ຫຼັກຖານໃໝ່ ທີ່ສາມາດ ປ່ຽນແປງ ຄຳສັ່ງນັ້ນ ທັງນີ້ ຕ້ອງຂຶ້ນ ກັບດຸນພິນິດ ຂອງ ປະທານ ສຕລ ແລະ ການຍື່ນ ຂໍ້ມູນ ຫຼັກຖານ ໃໝ່ ຕ້ອງບໍ່ເກີນ 7 ວັນ ຫຼັງຈາກ ມື້ໄດ້ຮັບຊາບ ຄຳສັ່ງ.

**ມາດຕາ 7: ການຈັດຕັ້ງ ປະຕິບັດ ຄຳສັ່ງ.**

ເມື່ອມີ ການສອບສວນ ແລະ ມີ ຄຳສັ່ງ ລົງວິໄນ ຫຼື ດຳເນີນການ ອື່ນໆ ຕາມ ທີ່ໄດ້ ບັນຍັດ ໄວ້ຢູ່ໃນ ລະບຽບ ສະບັບນີ້ແລ້ວ ສຕລ ຕ້ອງດຳເນີນການ ຕາມ ຄຳສັ່ງ ສະບັບ ດັ່ງກ່າວນັ້ນ ທັນທີ.

## ໝວດທີ 3
## ໂທດ ແລະ ມາດຕະການ ການລົງໂທດ

ມາດຕາ 8: ໂທດ.

ໂທດ ແມ່ນ ມາດຕະການ ແລະ ຂໍ້ບັງຄັບ ຂອງ ສຕລ ທີ່ກຳນົດໄວ້ ໃນ ລະບຽບ ສະບັບນີ້ ນຳໃຊ້ ເພື່ອ ເປັນບ່ອນອີງ ໃນ ການລົງ ວິໄນ ແລະ ດຳເນີນ ຄະດີ ຕໍ່ຜູ້ ລະເມີດ ກົດລະບຽບ ຕ່າງໆ ທີ່ທາງ ສຕລ ວາງອອກ ໃນ ແຕ່ລະ ໄລຍະ.

ມາດຕາ 9: ມາດຕະການ ການລົງໂທດ.

1. ສຶກສາອົບຮົມ, ກ່າວເຕືອນ, ແລະ ຂຽນ ໃບສຳຫຼວດ;
2. ການປັບໃໝ;
3. ພັກ ການປະຕິບັດ ໜ້າທີ່;
4. ຫ້າມ ເຂົ້າຮ່ວມ ການແຂ່ງຂັນ ເຕະບານ;
5. ຫ້າມເຂົ້າ ເດີ່ນບານເຕະ;
6. ຍຶດ ໃບອະນຸຍາດ ທີ່ອອກໃຫ້ ໂດຍ ສຕລ ຫຼື ພາກສ່ວນ ທີ່ກ່ຽວຂ້ອງ ຄືນ;
7. ຫ້າມ ບໍ່ໃຫ້ ຫຍຸ້ງກ່ຽວ ກັບ ກິດຈະກຳ ບານເຕະ;
8. ປະຕິບັດ ບົດລົງໂທດ ອື່ນໆ ທີ່ວາງໄວ້ ຢູ່ໃນ ລະບຽບ ວ່າດ້ວຍ ການລົງວິໄນ ແລະ ບັນດາ ລະບຽບ ກົດໝາຍ ອື່ນໆ ທີ່ກ່ຽວຂ້ອງ.

ມາດຕາ 10: ມາດຕະການ ການລົງໂທດ ຕໍ່ ນັກກິລາ.

ສຳລັບ ມາດຕະການ ແລະ ລາຍລະອຽດ ຂອງ ການລົງໂທດ ຕໍ່ ນັກກິລາ ບານເຕະ ແມ່ນໃຫ້ ປະຕິບັດ ຕາມ ມາດຕາ 10 ຂອງ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

ມາດຕາ 11: ມາດຕະການການລົງໂທດ ຕໍ່ເຈົ້າໜ້າທີ່ສະໂມສອນ.

ສຳລັບ ມາດຕະການ ແລະ ລາຍລະອຽດ ຂອງ ການລົງໂທດ ຕໍ່ ເຈົ້າໜ້າທີ່ ສະໂມສອນ ແມ່ນໃຫ້ ປະຕິບັດ ຕາມ ມາດຕາ 11 ຂອງ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

ມາດຕາ 12: ມາດຕະການການລົງໂທດ ຕໍ່ສະໂມສອນ.

ສຳລັບ ມາດຕະການ ແລະ ລາຍລະອຽດ ຂອງ ການລົງໂທດ ຕໍ່ ສະໂມສອນ ແມ່ນໃຫ້ປະຕິບັດ ຕາມ ມາດຕາ 12 ຂອງ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

ມາດຕາ 13: ມາດຕະການການລົງໂທດ ຕໍ່ກອງເຊຍ.

ສຳລັບ ມາດຕະການ ແລະ ລາຍລະອຽດ ຂອງ ການລົງໂທດ ຕໍ່ ກອງເຊຍ ແມ່ນໃຫ້ປະຕິບັດ ຕາມ ມາດຕາ 13 ຂອງ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

ມາດຕາ 14: ມາດຕະການ ການລົງໂທດ ຕໍ່ ເຈົ້າໜ້າທີ່ ການແຂ່ງຂັນ.

ສໍາລັບ ມາດຕະການ ແລະ ລາຍລະອຽດ ຂອງ ການລົງໂທດ ຕໍ່ ເຈົ້າໜ້າທີ່ ຈັດການແຂ່ງຂັນ ແມ່ນໃຫ້ປະຕິບັດ ຕາມ ມາດຕາ 14 ຂອງ ລະບຽບ ວ່າດ້ວຍ ການລົງວິໄນ ຂອງ ສຕລ ສະບັບ ລົງວັນທີ 10 ທັນວາ 2023.

# ໝວດທີ 4
# ບົດບັນຍັດ ສຸດທ້າຍ

**ມາດຕາ 15: ການຈັດຕັ້ງ ປະຕິບັດ.**

ນັກກິລາ, ເຈົ້າໜ້າທີ່ ທີມ, ສະໂມສອນ ຕ້ອງປະຕິບັດ ຕາມ ລະບຽບວິໄນ ແລະ ການປະພຶດ, ລະບຽບ ຂໍ້ບັງຄັບ ອື່ນໆ ທີ່ ສຕລ ວາງອອກ ແລະ ປະກາດ ນຳໃຊ້ ຢ່າງເຄັ່ງຄັດ.

**ມາດຕາ 16: ການຈັດຕັ້ງ ປະຕິບັດ ນິຕິກຳ ສະບັບອື່ນ.**

ຫາກ ການລົງໂທດ ທີ່ກຳນົດໄວ້ ໃນ ລະບຽບ ການລົງໂທດ ສະບັບນີ້ ບໍ່ຄອບຄຸມ ເຖິງ ຄວາມຜິດ ໃດໜຶ່ງ ທີ່ເກີດຂຶ້ນ ຫຼັງຈາກ ອອກ ລະບຽບ ສະບັບນີ້ ຫ້ອງການ ນິຕິກຳ, ອະນຸ ກຳມະການ ວິໄນ ແລະ ອະນຸ ກຳມະການ ອຸທອນ ຂອງ ສຕລ ສາມາດ ນຳໃຊ້ ລະບຽບ ຂອງ ເອເອຟຊີ (AFC) ຫຼື ຟີຟ່າ (FIFA) ເປັນບ່ອນອີງໄດ້.

**ມາດຕາ 17: ຜົນສັກສິດ.**

ລະບຽບ ສະບັບນີ້ ໄດ້ຖືກ ຮັບຮອງ ເອົາໂດຍ ກອງປະຊຸມ ຄົບຄະນະ ຂອງ ສະຫະພັນ ບານເຕະ ແຫ່ງຊາດ ລາວ ຄັ້ງວັນທີ 10 ທັນວາ 2023 ຊຶ່ງ ຈະມີ ຜົນສັກສິດ ແລະ ບັງຄັບໃຊ້ ນັບແຕ່ ວັນທີ່ລົງ ລາຍເຊັນ ຂອງ ທ່ານ ປະທານ ສະຫະພັນ ບານເຕະ ແຫ່ງຊາດ ລາວ ເປັນຕົ້ນໄປ.

ປະທານ ສະຫະພັນ ບານເຕະ ແຫ່ງຊາດ ລາວ

ສ.ຕ.ລ
LAO FOOTBALL
FEDERATION

**ວິເພັດ ສີຫາຈັກຣ**